# APIXA

**Generic name:** Apixaban tablets
**Brand name:** APIXA
**Composition:**
Apixaban.......................................................................................................5mg
**Indications:**

- To reduce the Risk of Stroke and Systemic Embolism in patients with nonvalvular Atrial Fibrillation.
- for the prophylaxis of deep vein thrombosis (DVT), which may lead to pulmonary embolism (PE), in patients who have undergone hip or knee replacement surgery.
- For the treatment (DVT) and (PE), and for the reduction in the risk od recurrent DVT and PE following initial therapy.

**Dosage and ministration:**

- Reduction of Risk of Stroke and Systemic Embolism in Patients with Nonvalvular Atrial Fibrillation
  The recommended dose for most patients is 5 mg taken orally twice daily.
  The recommended dose is 2.5 mg twice daily in patients with at least three of the following characteristics:
  - age greater than or equal to 80 years
  - body weight less than or equal to 60 kg
  - serum creatinine greater than or equal to 1.5 mg/dL
- Prophylaxis of Deep Vein Thrombosis Following Hip or Knee Replacement Surgery The recommended dose of is 2.5 mg taken orally twice daily. The initial dose should be taken 12 to 24 hours after surgery.
- In patients undergoing hip replacement surgery, the recommended duration of treatment is 35days.
- In patients undergoing knee replacement surgery, the recommended duration of treatment is 12days.
- Treatment of DVT and PE The recommended dose is 10 mg taken orally twice daily for the first 7 days of therapy. After 7 days, the recommended dose is 5 mg taken orally twice daily.
- Reduction in the Risk of Recurrence of DVT and PE The recommended dose is 2.5 mg taken twice daily after at least 6 months of treatment for DVT or PE.

**Contraindications:**

- Patients who are allergic to the active ingredient or any excipients in the tablets.
- Patients with liver disease with coagulopathy and clinically associated bleeding risk.
- Patients with severe hepatic impairment.

**Warning:**

- If severe bleeding occurs, apixaban should be discontinued immediately.
- Apixaban is not recommended during pregnancy.
- Prosthetic heart valves use not recommended

**Adverse Effects:**

- Common adverse reactions include anemia, bleeding, bruising and nausea. Apixaban may cause an increased risk of internal bleeding in some tissues or organs, which may lead to anemia.

**Dosage form:** White tablet
**Expiry date:** 36 months from the date of manufacture.
**Packaging:** 5mg per tablet, 30 tablets per bottle.
**Storage:**

- Store in a dry place below 30$^{o}$C protected from light.
- Keep out of reach of children.

**Manufactured by:**
Laos Alliance Pharmaceutical Group Factory
Saysettha Development Zone, Vientiane Capital, Lao PDR
Tel: +856-21-737 051
www.alliancepharmagroup.com

# ເອກະສານກຳກັບຢາ
# APIXA

**ຊື່ທົ່ວໄປ:** Apixaban tablets
**ຊື່ຜະລິດຕະພັນ:** APIXA
**ສ່ວນປະກອບ:**
Apixaban........................................................................................................5mg

**ຂໍ້ບົ່ງໃຊ້:**
- ຊ່ວຍຫຼຸດຄວາມສ່ຽງເປັນ Stroke and Systemic Embolism ໃນຄົນເຈັບທີ່ມີກ້ອນເລືອດອຸດຕັນໃນຫຼອດເລືອດ ຄົນເຈັບທີ່ເປັນພະຍາດຫົວໃຈຫ້ອງເທິງສັ່ນ (Atrial fibrillation = AF) ທີ່ບໍ່ມີພະຍາດລີ້ນຫົວໃຈຮ່ວມນຳ.
- ນຳໃຊ້ເພື່ອຈຸດປະສົງໃນການປ້ອງກັນການເກີດພາວະຫຼອດເລືອດດຳອຸດຕັນສ່ວນເລິກ (DVT), ເຊິ່ງອາດຈະນຳໄປສູ່ພາວະເສັ້ນເລືອດໃນປອດອຸດຕັນ (PE), ໃນຄົນເຈັບທີ່ໄດ້ຮັບການຜ່າຕັດປ່ຽນຂໍ່ສະໂພກ ຫຼື ຂໍ່ເຂົ່າ.
- ນຳໃຊ້ເພື່ອຫຼຸດຜ່ອນຄວາມສ່ຽງຂອງການກັບມາເປັນຊ້ຳຂອງພາວະຫຼອດເລືອດດຳອຸດຕັນສ່ວນເລິກ (DVT) ແລະ ເສັ້ນເລືອດໃນປອດອຸດຕັນ (PE) ພາຍຫຼັງການປິ່ນປົວເບື້ອງຕົ້ນ.

**ຂະໜາດ ແລະ ວິທີໃຊ້:**
- ຄົນເຈັບພະຍາດຫົວໃຈຫ້ອງເທິງສັ່ນ (AF) ທີ່ບໍ່ມີພະຍາດລີ້ນຫົວໃຈຮ່ວມນຳ
  ກິນ Apixa 5mg 1 ເມັດ ເຊົ້າ-ແລງ ຄົນເຈັບພະຍາດຫົວໃຈຫ້ອງເທິງສັ່ນ (AF) ທີ່ບໍ່ມີພະຍາດລີ້ນຫົວໃຈຮ່ວມນຳ ກິນ Apixa 5mg 1 ເມັດ ເຊົ້າ-ແລງ. ສຳລັບກຸ່ມຄົນເຈັບພິເສດທີ່ມີປັດໃຈ 3 ຢ່າງນີ້ ຄວນຫຼຸດປະລິມານຢາລົງ ກິນ Apixa 2.5mg 2 ເທື່ອ/ມື້ ເຊົ້າ-ແລງ.
  - ຄົນເຈັບອາຍຸຫຼາຍ (≥ 80 ປີ).
  - ນ້ຳໜັກໜ້ອຍກວ່າ 60 ກິໂລ.
  - ຜູ້ທີ່ມີ Serum creatinine ≥1.5 mg/dL.
- ໃຊ້ປ້ອງກັນການເກີດກ້ອນເລືອດອຸດຕັນເສັ້ນເລືອດດຳ (DVT) ສຳຫຼັບຄົນເຈັບທີ່ໄດ້ຮັບການຜ່າຕັດປ່ຽນຂໍ່ສະໂພກ ກົກຂາ ແລະ ຂໍ່ເຂົ່າ ກິນ Apixa 2,5mg 2 ຄັ້ງ/ມື້, ເຊົ້າ-ແລງ ຄວນເລີ່ມໃຫ້ຢາຄັ້ງທຳອິດພາຍໃນ 12 ຫາ 24 ຊົ່ວໂມງ ພາຍຫຼັງສຳເລັດການຜ່າຕັດ.
- ສຳລັບຄົນເຈັບທີ່ໄດ້ຮັບການຜ່າຕັດປ່ຽນຂໍ່ສະໂພກ, ໄລຍະເວລາການປິ່ນປົວທີ່ຖືກແນະນຳແມ່ນ 35 ວັນ.
- ສຳລັບຄົນເຈັບທີ່ໄດ້ຮັບການຜ່າຕັດປ່ຽນຂໍ່ເຂົ່າ, ໄລຍະເວລາການປິ່ນປົວທີ່ແນະນຳແມ່ນ 12 ວັນ.
- ຄົນເຈັບ DVT ທີ່ມີກ້ອນເລືອດອຸດຕັນຢູ່ຂາ ແລະ ຄົນເຈັບ PE ທີ່ມີກ້ອນເລືອດອຸດຕັນຢູ່ປອດ ໄລຍະ 7 ມື້ທຳອິດ: ກິນ 10mg 2 ຄັ້ງ/ມື້ ເຊົ້າ-ແລງ ຫຼັງຈາກ 7 ມື້ ກິນ 5mg 2 ຄັ້ງ/ມື້ ເຊົ້າ-ແລງ.
- ປ້ອງກັນການມາເປັນຊ້ຳຂອງ DVT ແລະ PE ກິນ 2.5mg 2 ຄັ້ງ/ມື້ ເຊົ້າ-ແລງ ພາຍຫຼັງການປິ່ນປົວ (DVT) ແລະ ( PE) ຢ່າງຕ່ຳ 6 ເດືອນ.

**ຂໍ້ຫ້າມໃຊ້:**
- ສຳລັບຄົນເຈັບທີ່ແພ້ຢານີ້ ຫຼື ແພ້ສ່ວນປະກອບທີ່ປະສົມໃນຢານີ້ ແມ່ນຫ້າມໃຊ້.
- ຫ້າມໃຊ້ Apixaban ໃນຄົນເຈັບທີ່ມີອາການກ່ຽວກັບພະຍາດຕັບຜິດປົກກະຕິໃນການແຂງຕົວຂອງເລືອດ ແລະ ມີຄວາມສ່ຽງຕໍ່ການເລືອດອອກ.
- ຄົນເຈັບທີ່ມີພາວະຕັບບົກພ່ອງຮຸນແຮງ.

**ຄຳເຕືອນ:**
- ຖ້າພົບເຫັນ ສະພາບເລືອດໄຫຼບໍ່ຢຸດ ຫຼື ເລືອດອອກຮຸນແຮງໃນເວລານຳໃຊ້ຢານີ້ ໃຫ້ຢຸດໃຊ້ທັນທີ.
- Apixaban ບໍ່ຄວນນຳໃຊ້ ໃນແມ່ຍິງຖືພາ.
- ບໍ່ແນະນຳໃຫ້ໃຊ້ໃນຄົນເຈັບລີ້ນຫົວໃຈທຽມ.

**ຜົນຂ້າງຄຽງ:**
- ຜົນຂ້າງຄຽງທີ່ມັກພົບມີເລືອດຈາງ, ເລືອດອອກບໍ່ຢຸດ, ມີຮອຍຈ້ຳຕາມບໍລິເວນຜິວ, ປຸ້ນທ້ອງປວດຮາກ. Apixaban ສາມາດເປັນສາເຫດເຮັດໃຫ້ເລືອດອອກໃນອົງຄະຕ່າງໆ ເຊິ່ງສາມາດນຳໄປສູ່ການເກີດພະຍາດເລືອດຈາງ.

**ຮູບແບບຢາ:** ຢາເມັດສີຂາວ.
**ວັນໝົດອາຍຸ:** 36 ເດືອນນັບຈາກວັນທີຜະລິດ.
**ຂະໜາດບັນຈຸ:** ເມັດ 5mg, ບັນຈຸໃນກ່ອງ, ກ່ອງລະ 30 ເມັດ.
**ການເກັບຮັກສາ:**
- ຄວນເກັບຮັກສາໄວ້ໃນສະຖານທີ່ເຢັນ, ແຫ້ງ, ອຸນຫະພູມ ຕ່ຳກວ່າ 30$^{o}$C, ບໍ່ໃຫ້ຖືກແສງແດດ.
- ເກັບໄວ້ໃນບ່ອນທີ່ເດັກບໍ່ສາມາດຍື່ເຖິງ.

**ຜະລິດໂດຍ:**
ໂຮງງານຜະລິດຢາ ລາວພັນທະມິດ ຟາກມາ ກຣຸບ ຈຳກັດ
ສະຖານທີ່: ຕັ້ງຢູ່ເຂດ ພັດທະນາກວມລວມ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: +856-21-737 051
www.alliancepharmagroup.com